# ຕົວຢ່າງການໃຊ້ຈ່າຍທາງການແພດ

ຂ້າງລຸ່ມນີ້ແມ່ນຄ່າໃຊ້ຈ່າຍທາງການແພດປະເພດຕ່າງໆທີ່ອາດຈະຖືກນໍາໃຊ້ເພື່ອຕອບສະໜອງກັບລາຍຈ່າຍຂອງທ່ານ.

**ກະລຸນາຈື່ໄວ້:** ພວກເຮົາສາມາດໃຊ້ໃບບິນຄ່າຕ່າງໆເທົ່ານັ້ນ **ຫຼັງຈາກ** Medicare Part A/B/D, ໂຄງການ Medicare Savings Program (MSP), ຫຼື ບໍລິສັດປະກັນໄພອື່ນໆໄດ້ຈ່າຍສ່ວນຂອງພວກເຂົາເຈົ້າ. ຖ້າທ່ານຢູ່ໃນໂຄງການ Qualified Medicare Beneficiary (QMB), ພວກເຮົາບໍ່ສາມາດນໍາໃຊ້ໃບບິນຕ່າງໆທີ່ຄຸ້ມຄອງໂດຍ Medicare Part A / B ໄດ້.

**ຕົວຢ່າງຂອງຄ່າໃຊ້ຈ່າຍທາງການແພດທົ່ວໄປ:**

1. ຖ້າຖືກກໍານົດໂດຍຜູ້ສະໜອງທີ່ມີໃບອະນຸຍາດ (ພ້ອມກັບຫຼັກຖານ) - ຢາ ແລະ ອຸປະກອນທາງການແພດທີ່ບໍ່ຕ້ອງມີໃບສັ່ງແພດ. ເຫຼົ່ານີ້ອາດຈະລວມມີ:
   - ວິຕາມິນ, ຢາແກ້ປວກ ແລະ ຢາສະໝຸນໄພ.
2. ໂຮງໝໍ, ຄລີນິກ, ຫຼື ບໍລິການອື່ນໆ:
   - ທ່ານໝໍ, ທັນຕະແພດ, ແພດປົວຕາ.
   - ໄດ້ຮັບອະນຸຍາດການບໍລິການເບິ່ງແຍງໃນ-ບ້ານ.
   - ການບໍລິການດ້ານສຸຂະພາບຈິດ ຫຼື ການໃຫ້ຄໍາປຶກສາ, ຫຼື ການຄຸ້ມຄອງກໍລະນີຕົວຢ່າງໃນຊຸມຊົນ.
3. ຄ່າໃຊ້ຈ່າຍ ການເດີນທາງ ທີ່ກ່ຽວຂ້ອງໃນການໄປພົບແພດ, ການຮັບເອົາໃບສັ່ງແພດ ຫລື ອຸປະກອນທາງການແພດ:
   - ການເດີນທາງທີ່ເກີດຂຶ້ນໃນລົດສ່ວນຕົວຂອງທ່ານ.
   - ຄ່າຈອດລົດ ຫຼື ຄ່າຜ່ານທາງ, ຄ່າໂດຍສານສໍາລັບການນໍາໃຊ້ລົບລົດ, ລົດເມ, ເຮືອ, ລົດແທັກຊີ່, ຫລື ການໂດຍສານຮ່ວມ (Uber, Lyft, ແລະ ອື່ນໆ).
   - ຄ່າທີ່ພັກເມື່ອຢູ່ໄກຈາກບ້ານເພື່ອຮັບການປິ່ນປົວ.
4. ຄ່າໃຊ້ຈ່າຍການບໍລິການສັດລ້ຽງເຊັ່ນ: ອາຫານ ແລະ ການດູແລທາງສັດຕະວະແພດ.
5. ອຸປະກອນທາງການແພດເຊັ່ນ: ເຄື່ອງຊ່ວຍໃນການເຄື່ອນທີ່, ເຄື່ອງຊ່ວຍເຫຼືອຟື້ນຟູ, ຂາທຽມ / ກາຍຍະທຽມ ແລະ ລະບົບຕອບໂຕ້ສຸກເສີນອີເລັກໂທຣນິກ (EERS).
6. ໃນທາງການແພດມີຄວາມຕ້ອງການການປັບປຸງທີ່ຢູ່ອາໄສໃຫ້ເໝາະສົມກັບຄົນທີ່ເປັນຕາບອດ ຫຼື ພິການ.
7. ການອອກໃບເກັບເງິນຂອງລັດສໍາລັບການບໍລິການທາງການແພດຖືກຍອມຮັບພາຍໃຕ້ກົດໝາຍຂອງລັດວໍຊິງຕັນ.

**ກະລຸນາເບິ່ງໜ້າຕໍ່ໄປສໍາລັບຄໍາແນະນໍາເພີ່ມເຕີມ.**

**ຫຼັກຖານຂອງຄ່າໃຊ້ຈ່າຍທາງການແພດຂອງທ່ານຕ້ອງລວມມາພ້ອມ:**

1. ໃບບິນຄ່າໂຮງໝໍ, ທ່ານໝໍ, ຫຼື ການບໍລິການອື່ນໆ. ລາຍງານ **ຕ້ອງລວມ** ທຸກຢ່າງດັ່ງລຸ່ມນີ້:
    - ຊື່ຄົນເຈັບ;
    - ທຸກໃບໄດ້ນໍາສົ່ງພ້ອມກັບລາຍງານ;
    - ຂໍ້ມູນຕິດຕໍ່ຂອງຜູ້ສະໜອງ;
    - ວັນທີ່ຂອງລາຍງານພາຍໃນໄລຍະເວລາຖານປັດຈຸບັນ;
    - ວັນທີຂອງການບໍລິການຕ່າງໆ ແລະ ຄ່າບໍລິການທັງໝົດ ແລະ/ຫຼື ຄ່າໃຊ້ຈ່າຍໃນການເບິ່ງແຍງດູແລ;
    - ການຊໍາລະໂດຍພາກສ່ວນທີສາມ (Medicare, MSP, ຫຼື ປະກັນໄພອື່ນ); ແລະ
    - ຍອດເຫຼືອສຸດທ້າຍຂອງຄົນເຈັບ.

2. ໃບສັ່ງແພດ. ຫຼັກຖານ **ຕ້ອງລວມ** ທຸກຢ່າງດັ່ງລຸ່ມນີ້:
    - ຊື່ຄົນເຈັບ, ຊື່ຮ້ານຂາຍຢາ;
    - ຊື່ຢາ ແລະ ເລກທີ່ໃບສັ່ງແພດ;
    - ການຊໍາລະໂດຍພາກສ່ວນທີສາມ (Medicare Part D ຫຼືອື່ນໆ); ແລະ
    - ຍອດເຫຼືອສຸດທ້າຍຂອງຄົນເຈັບ.

    **ຕົວຢ່າງວິທີສະແດງຫຼັກຖານ:**

    - ໃບຮັບເງິນລົງທະບຽນ **ແລະ** ໃບຮັບເງິນຂອງຮ້ານຂາຍຢາ; **ຫຼື**
    - ບົດສະຫລຸບໃບສັ່ງແພດທີ່ມີລາຍເຊັນຂອງເພສັດສະກອນ; ຫຼື
    - ບົດສະຫຼຸບ Medicare Part D

3. ຄ່າເດີນທາງພ້ອມກັບວັນທີຂອງການເດີນທາງ:
    - ບັນທຶກມາຍລ໌ – ເບິ່ງຕົວຢ່າງການບັນທຶກມາຍລ໌ໃນໜ້າຕໍ່ໄປ.
    - ໃບຮັບເງິນຄ່າທໍານຽມ ຫຼື ປີ້ຕ່າງໆເຊັ່ນ: ບ່ອນຈອດລົດ, ປີ້ລົດເມ ແລະ ອື່ນໆ.

| ຕົວຢ່າງການບັນທຶກມາຍລ໌ | | | | |
|---|---|---|---|---|
| ວັນທີ | ຊື່ຂອງຜູ້ສະໜອງ | ທີ່ຢູ່ຂອງຜູ້ສະໜອງ | ໄລຍະທາງໄປກັບເປັນມາຍລ໌ | ຄ່າທຳນຽມຈອດລົດ (ເພີ່ມໃບຮັບເງິນ) |
| **ຕົວຢ່າງ 1: 01/03/2020** | **Harborview** | **325 9th Ave., Seattle** | **15** | **$20** |
| **ຕົວຢ່າງ 1: 01/05/2020** | **ຮ້ານຂາຍຢາ Walmart** | **1000 Greenlake, Seattle** | **20** | |

## ບັນທຶກມາຍລ໌

| ວັນທີ | ຊື່ຂອງຜູ້ສະໜອງ | ທີ່ຢູ່ຂອງຜູ້ສະໜອງ | ໄລຍະທາງໄປກັບເປັນມາຍລ໌ | ຄ່າທຳນຽມຈອດລົດ (ເພີ່ມໃບຮັບເງິນ) |
|---|---|---|---|---|
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |